# ບົດເຝິກຫັດ

# ໜ່ວຍຄອບຄົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 2



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2015

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2015
ສະຫງວນລິຂະສິດ

# ບົດເຝິກຫັດ

# ໜ່ວຍຄອບຄົວຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 2


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຊໍ່ເນັງ ຢົງເນັ່ງຊົງ
ພູມະລີ ແສງຈັນນະວົງ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຮຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ

ພິມເຂົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ທອງດຳ ທອງສົມ



**ກະຊວງສຶກສາທິການ ແລະ ກິລາ**
**ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ**
2015

# ຄຳນຳ

ການກຽມຄວາມພ້ອມອັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈອັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດ ຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍຄອບຄົວຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງຄອບຄົວຂອງຂ້ອຍມີດັ່ງນີ້:

1. ສະມາຊິກໃນຄອບຄົວ.
2. ລັກສະນະຂອງເຮືອນ ແລະ ການຮັກສາຄວາມສະອາດ.
3. ຫ້ອງຕ່າງໆ, ເຄື່ອງໃຊ້ ແລະ ຮັກສາຄວາມສະອາດ.
4. ການປະຕິບັດຕົນໃນຄອບຄົວ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍຄອບຄົວຂອງຂ້ອຍເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງ ໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນ ຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

**ໜ້າ**


ກິດຈະກຳການຮຽນ-ການສອນໜ່ວຍ ຄອບຄົວຂອງຂ້ອຍ ........ 1
ສະມາຊິກໃນຄອບຄົວ ........ 2
ຄົນສຳຄັນພາຍໃນຄອບຄົວ ........ 3
ໜ້າທີ່ຮັບຜິດຊອບຂອງພໍ່ ແລະ ແມ່ໃນຄອບຄົວ ........ 4
ໜ້າທີ່ຮັບຜິດຊອບຂອງອ້າຍ ແລະ ເອື້ອຍໃນຄອບຄົວ ........ 5
ຍາດຕິພີ່ນ້ອງຂອງແມ່ ........ 6
ຍາດຕິພີ່ນ້ອງຂອງພໍ່ ........ 7
ການຊ່ວຍເຫຼືອຍາດຕິພີ່ນ້ອງ ........ 8
ການຊ່ວຍເຫຼືອຍາດຕິພີ່ນ້ອງ ........ 9
ຄອບຄົວອົບອຸ່ນໃນຄອບຄົວ ........ 10
ລັກສະນະຂອງເຮືອນ ແລະ ການຮັກສາຄວາມສະອາດ ........ 11
ລັກສະນະຂອງເຮືອນໄມ້ ........ 12
ລັກສະນະຂອງເຮືອນກໍ່ ........ 13
ປະເພດຂອງເຮືອນ ........ 14
ເຮືອນໄມ້ ........ 15
ເຮືອນກໍ່ ........ 16
ການຮັກສາຄວາມສະອາດພາຍໃນເຮືອນ ........ 17
ຫ້ອງຕ່າງໆ ໃນເຮືອນ ........ 18
ເຄື່ອງໃຊ້ໃນການທຳຄວາມສະອາດ ........ 19
ຫ້ອງນອນສະອາດ ........ 20
ຫ້ອງຮັບແຂກສະອາດ ........ 21
ຫ້ອງຄົວສະອາດ ........ 22
ຫ້ອງນ້ຳສະອາດ ........ 23
ການປະຕິບັດຕົນໃນຄອບຄົວ ........ 24
ການປະຕິບັດຕົນໃນການນອນ ........ 25
ການປະຕິບັດຕົນໃນການກິນ ແລະ ການອະນາໄມຮ່າງກາຍ ........ 26
ການປະຕິບັດຕົນໃນການນຸ່ງເຄື່ອງ ........ 27
ການປະຢັດເຄື່ອງຫຼິ້ນ ........ 28
ການປະຢັດເຄື່ອງໃຊ້ ........ 29

ການມີສ່ວນຮ່ວມໃນການເກັບມ້ຽນເຄື່ອງນຸ່ງ, ເຄື່ອງໃຊ້, ເຄື່ອງຫຼິ້ນ ........ 30
ມາລະຍາດໃນການກິນອາຫານ ........ 31
ມາລະຍາດໃນການດື່ມເຄື່ອງດື່ມ ........ 32
ມາລະຍາດໃນການນັ່ງ ........ 33
ມາລະຍາດໃນການຍ່າງ ........ 34
ມາລະຍາດໃນການນົບໄຫວ້ ........ 35
ມາລະຍາດໃນການນົບຂໍອະນຸຍາດ ........ 36

# ກິດຈະກຳການຮຽນ-ການສອນ

# ໜ່ວຍ ຄອບຄົວຂອງຂ້ອຍ









**ຫົວຂໍ້ ການຮຽນຂອງແຕ່ລະອາທິດໜ່ວຍຄອບຄົວຂອງຂ້ອຍປະກອບມີ:**

1. ສະມາຊິກໃນຄອບຄົວ.
2. ລັກສະນະຂອງເຮືອນ ແລະ ການຮັກສາຄວາມສະອາດ.
3. ຫ້ອງຕ່າງໆ, ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດ.
4. ການປະຕິບັດຕົນໃນຄອບຄົວ.

# ສະມາຊິກໃນຄອບຄົວ






## ຫົວຂໍ້ເນື້ອໃນການຮຽນ ອາທິດທີ 1 ສະມາຊິກໃນຄອບຄົວ:

1. ຄົນສຳຄັນພາຍໃນຄອບຄົວ.
2. ໜ້າທີ່ຮັບຜິດຊອບຂອງພໍ່ ແລະ ແມ່ໃນຄອບຄົວ.
3. ຍາດຕິພີ່ນ້ອງຂອງແມ່ ແລະ ພໍ່.
4. ການຊ່ວຍເຫຼືອຍາດຕິພີ່ນ້ອງ.
5. ຄວາມອົບອຸ່ນໃນຄອບຄົວ.

# ຄົນສຳຄັນໃນຄອບຄົວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄົນສຳຄັນພາຍໃນຄອບຄົວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ໃນຄອບຄົວຂອງຫຼານມີໃຜແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຄົນສຳຄັນພາຍໃນຄອບຄົວມີ ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ໜ້າທີ່ຮັບຜິດຊອບຂອງພໍ່ ແລະ ແມ່





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກໜ້າທີ່ຮັບຜິດຊອບຂອງພໍ່, ແມ່ໃນຄອບຄົວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ພໍ່, ແມ່ ມີໜ້າທີ່ຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ໜ້າທີ່ຂອງພໍ່, ແມ່ ປຸງແຕ່ງອາຫານ, ຊັກ, ລີດ ແລະ ພັບເຄື່ອງນຸ່ງ.
- ໃຫ້ເດັກນ້ອຍທາສີຮູບ ພໍ່, ແມ່ ໂດຍນຳໃຊ້ສີຕາມໃຈ.

# ໜ້າທີ່ຮັບຜິດຊອບຂອງອ້າຍ ແລະ ເອື້ອຍໃນຄອບຄົວ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກໜ້າທີ່ຮັບຜິດຊອບຂອງອ້າຍ ແລະ ເອື້ອຍໃນຄອບຄົວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ພວກເຂົາກຳລັງເຮັດຫຍັງ? ໃນຄອບຄົວ ຂອງຫຼານອ້າຍ ແລະ ເອື້ອຍເຮັດວຽກຫຍັງໃນເຮືອນ?
- ໃຫ້ເດັກນ້ອຍສະຫຼຸບ: ອ້າຍ, ເອື້ອຍມີໜ້າທີ່ຖູເຮືອນ, ລ້າງຖ້ວຍ ແລະ ຫຼິ້ນຮ່ວມກັບນ້ອງ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ຍາດຕິພີ່ນ້ອງຂອງແມ່







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຍາດຕິພີ່ນ້ອງຂອງແມ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜ? ຫຼານມີພໍ່ເຖົ້າ, ແມ່ເຖົ້າ, ປ້າ, ລຸງ, ນ້າບ່າວ ແລະ ນ້າສາວບໍ? ຍາດຕິພີ່ນ້ອງຂອງແມ່ ຫຼານມີໃຜແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຍາດຕິພີ່ນ້ອງຂອງແມ່ປະກອບມີ ພໍ່ເຖົ້າ, ແມ່ເຖົ້າ, ປ້າ, ລຸງ, ນ້າບ່າວ ແລະ ນ້າສາວ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ຍາດຕິພີ່ນ້ອງຂອງພໍ່







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຍາດຕິພີ່ນ້ອງຂອງພໍ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ມີໃຜແດ່? ຫຼານມີ ປູ່, ຍ່າ, ອາວ, ອາ, ປ້າ ແລະ ລຸງບໍ? ຍາດຕິພີ່ນ້ອງຂອງພໍ່ຫຼານມີໃຜແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຍາດຕິພີ່ນ້ອງຂອງພໍ່ປະກອບມີ ປູ່, ຍ່າ, ປ້າ, ລຸງ, ອາວ ແລະ ອາ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການຊ່ວຍເຫຼືອຍາດຕິພີ່ນ້ອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຊ່ວຍເຫຼືອຍາດຕິພີ່ນ້ອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ການຊ່ວຍເຫຼືອຍາດຕິພີ່ນ້ອງຢ້ຽມຢາມໃນເວລາເຈັບເປັນ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການຊ່ວຍເຫຼືອຍາດຕິພີ່ນ້ອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຊ່ວຍເຫຼືອຍາດຕິພີ່ນ້ອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຫຼານເຄີຍຊ່ວຍວຽກພໍ່, ແມ່ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ການຊ່ວຍເຫຼືອຍາດຕິພີ່ນ້ອງຊ່ວຍວຽກໃນເວລາມີງານບຸນ.
- ໃຫ້ເດັກນ້ອຍທາສີຮູບຄືນ ໂດຍນຳໃຊ້ສີຕາມໃຈ.

# ຄອບຄົວອົບອຸ່ນໃນຄອບຄົວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄວາມອົບອຸ່ນໃນຄອບຄົວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ພໍ່ ແມ່ ເຄີຍກອດຫຼານບໍ?
- ໃຫ້ເດັກນ້ອຍສະຫຼຸບ: ຄວາມອົບອຸ່ນໃນຄອບຄົວແມ່ນການສະແດງຄວາມຮັກ ໂດຍການ ໂອບກອດ, ອູ້ມ, ລູບຫົວ; ໃຊ້ຄຳເວົ້າ ຊົມເຊີຍ, ດີຫຼາຍ, ຄຳຮູ້, ງາມຫຼາຍ ແລະ ເກັ່ງຫຼາຍ.
- ໃຫ້ເດັກນ້ອຍທາສີຮູບພໍ່, ແມ່ ແລະ ລູກ ໂດຍນຳໃຊ້ສີຕາມໃຈ.

# ລັກສະນະຂອງເຮືອນ ແລະ ການຮັກສາຄວາມສະອາດ









**ຫົວຂໍ້ການຮຽນໃນແຕ່ລະວັນຂອງອາທິດທີ 2 ລັກສະນະຂອງເຮືອນ ແລະ ການຮັກສາຄວາມສະອາດ.**

1. ລັກສະນະຂອງເຮືອນໄມ້ ແລະ ເຮືອນກໍ່.
2. ປະເພດຂອງເຮືອນ.
3. ເຮືອນໄມ້.
4. ເຮືອນກໍ່.
5. ການຮັກສາຄວາມສະອາດໃນເຮືອນ.

# ລັກສະນະຂອງເຮືອນໄມ້





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງເຮືອນໄມ້.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຮືອນຂອງຫຼານແມ່ນເຮືອນຫຼັງນ້ອຍ ຫຼື ຫຼັງໃຫຍ່?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງເຮືອນໄມ້ມີຫຼັງນ້ອຍ ແລະ ຫຼັງໃຫຍ່.
- ໃຫ້ເດັກນ້ອຍທາສີຮູບເຮືອນ ໂດຍນຳໃຊ້ສີຕາມໃຈ.

# ລັກສະນະຂອງເຮືອນກໍ່





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງເຮືອນກໍ່.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຮືອນຂອງຫຼານແມ່ນເຮືອນຫຼັງນ້ອຍ ຫຼື ຫຼັງໃຫຍ່?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງເຮືອນກໍ່ມີເຮືອນກໍ່ຫຼັງນ້ອຍ ແລະ ຫຼັງໃຫຍ່.
- ໃຫ້ເດັກນ້ອຍທາສີຮູບເຮືອນ ໂດຍນຳໃຊ້ສີຕາມໃຈ.

# ປະເພດຂອງເຮືອນ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງເຮືອນ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນເຮືອນປະເພດໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ປະເພດຂອງເຮືອນ ມີເຮືອນກໍ່, ເຮືອນໄມ້ ແລະ ເຮືອນກໍ່ປະສົມໄມ້.
- ໃຫ້ເດັກນ້ອຍທາສີຮູບເຮືອນ ໂດຍນໍາໃຊ້ສີຕາມໃຈ.

# ເຮືອນໄມ້



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນປະກອບຂອງເຮືອນໄມ້.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຮືອນໄມ້ປະກອບມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ສ່ວນປະກອບຂອງເຮືອນໄມ້ມີເສົາ, ປະຕູ, ປ່ອງຢ້ຽມ, ຝາເຮືອນ, ພື້ນເຮືອນ, ເພດານ, ຂັ້ນໄດ, ເຮັດດ້ວຍໄມ້ ແລະ ຫຼັງຄາມຸງສັງກະສີ ຫຼື ກະເບື້ອງ.
- ໃຫ້ເດັກນ້ອຍທາສີຮູບເຮືອນ ໂດຍນຳໃຊ້ສີຕາມໃຈ.

# ເຮືອນກໍ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນປະກອບຂອງເຮືອນກໍ່.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຮືອນກໍ່ປະກອບມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ສ່ວນປະກອບຂອງເຮືອນກໍ່ມີ ເສົາ, ປະຕູ, ປ່ອງຢ້ຽມ, ຝາເຮືອນ, ພື້ນເຮືອນ, ຂັ້ນໄດເຮັດດ້ວຍເຫຼັກ, ເພດານ, ດິນຈີ່, ຫີນ, ຊາຍ, ຊີມັງ, ຫຼັງຄາມຸງດ້ວຍກະເບື້ອງ ຫຼື ສັງກະສີ.
- ໃຫ້ເດັກນ້ອຍທາສີຮູບເຮືອນ ໂດຍນໍາໃຊ້ສີຕາມໃຈ.

# ການຮັກສາຄວາມສະອາດເຮືອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຮັກສາຄວາມສະອາດເຮືອນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນຮັກສາຄວາມສະອາດເຮືອນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການຮັກສາຄວາມສະອາດເຮືອນຕ້ອງປັດກວາດ, ຖູພື້ນເຮືອນ, ເຊັດປະຕູ, ປ່ອງຢ້ຽມ ແລະ ປັດໄຍແມງມຸມຕາມເພດານ.
- ໃຫ້ເດັກນ້ອຍທາສີຮູບເຮືອນ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຕ່າງໆໃນເຮືອນ









**ຫົວຂໍ້ເນື້ອໃນການຮຽນອາທິດທີ 3 ຫ້ອງຕ່າງໆໃນເຮືອນ:**

1. ເຄື່ອງໃຊ້ໃນການທຳຄວາມສະອາດເຮືອນ.
2. ຫ້ອງນອນສະອາດ.
3. ຫ້ອງຮັບແຂກສະອາດ.
4. ຫ້ອງຄົວສະອາດ.
5. ຫ້ອງນ້ຳສະອາດ.

# ເຄື່ອງໃຊ້ໃນການທຳຄວາມສະອາດເຮືອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງໃຊ້ໃນການທຳຄວາມສະອາດເຮືອນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ທຳຄວາມສະອາດເຮືອນ ມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງໃຊ້ທຳຄວາມສະອາດເຮືອນມີ ຄຸນ້ຳ, ຜ້າຖູພື້ນ, ຜ້າເຊັດ, ແປງຖູພື້ນ, ນ້ຳຢາຖູພື້ນ, ຟອຍກວດ ແລະ ຟອຍປັດໄຍແມງມຸມ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ທຳຄວາມສະອາດເຮືອນ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງນອນສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດຫ້ອງນອນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ໃນຫ້ອງນອນ ມີຫຍັງແດ່? ຄວນຮັກສາຄວາມສະອາດຫ້ອງນອນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງໃຊ້ໃນຫ້ອງນອນມີ ໝອນ, ຜ້າຫົ່ມ, ເສື່ອ, ຜ້າປູບ່ອນ, ມຸ້ງ, ຕຽງ, ຕູ້ ແລະ ສາດ; ການຮັກສາຄວາມສະອາດ ປັດກວາດເຊັດຖູບໍລິເວນຫ້ອງນອນ, ຊັກເຄື່ອງນອນໃຫ້ສະອາດ, ຕາກໃຫ້ແຫ້ງດີ ແລະ ເກັບມ້ຽນໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ເຄື່ອງໃຊ້ໃນຫ້ອງນອນ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຮັບແຂກສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດຫ້ອງຮັບແຂກ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຄື່ອງໃຊ້ໃນຫ້ອງຮັບແຂກ ເຮືອນຫຼານມີຫຍັງແດ່? ຄວນຮັກສາຄວາມສະອາດໃນຫ້ອງຮັບແຂກແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງໃຊ້ໃນຫ້ອງຮັບແຂກມີຕັ່ງນວມ, ໂຕະ, ຕູ້, ຕູ້ໂຊ, ເຕົ້າດອກໄມ້, ໂທລະພາບ ແລະ ຕັ່ງນວມ; ການຮັກສາຄວາມສະອາດ ເຊັດຖູ, ປັດ, ກວາດ ແລະ ຈັດເຄື່ອງໃຊ້ໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ເຄື່ອງໃຊ້ໃນຫ້ອງຮັບແຂກ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຄົວສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງໃຊ້  ແລະ ການຮັກສາຄວາມສະອາດຫ້ອງຄົວ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຄື່ອງໃຊ້ຢູ່ໃນຫ້ອງຄົວເຮືອນຫຼານ ມີຫຍັງແດ່? ຄວນຮັກສາຄວາມສະອາດໃນຫ້ອງຄົວແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງໃຊ້ໃນຫ້ອງຄົວມີ ຖ້ວຍ, ຈານ, ບ່ວງ, ຈອງ, ສ້ອມ, ໝໍ້, ພາເຂົ້າ, ເຕົາໄຟ ແລະ ຕິບເຂົ້າ; ການຮັກສາຄວາມສະອາດ ປັດ, ກວາດ, ເຊັດຖູ, ລ້າງ  ແລະ ເກັບມ້ຽນຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ເຄື່ອງໃຊ້ໃນຫ້ອງຄົວ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງນ້ຳສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງໃຊ້ ແລະ ການຮັກສາຄວາມສະອາດຫ້ອງນ້ຳ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຄື່ອງໃຊ້ໃນຫ້ອງນ້ຳເຮືອນຫຼານ ມີຫຍັງແດ່? ຄວນຮັກສາຄວາມສະອາດໃນຫ້ອງນ້ຳແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເຄື່ອງໃຊ້ໃນຫ້ອງນ້ຳມີ ໄຫນ້ຳ, ຄຸ, ໂອ, ຢາສະຜົມ, ແປງຖູແຂ້ວ ແລະ ຢາຖູແຂ້ວ; ການຮັກສາຄວາມສະອາດ ປັດກວາດ, ເຊັດຖູ, ລ້າງ ແລະ ເກັບມ້ຽນໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ເຄື່ອງໃຊ້ໃນຫ້ອງນ້ຳ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຄອບຄົວ









**ຫົວຂໍ້ເນື້ອໃນການຮຽນອາທິດທີ 4 ການປະຕິບັດຕົນໃນຄອບຄົວ:**

1. ການປະຕິບັດຕົນໃນການນອນ, ກິນ.
2. ການປະຢັດ ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.
3. ການມີສ່ວນຮ່ວມໃນການເກັບມ້ຽນເຄື່ອງນຸ່ງ, ເຄື່ອງໃຊ້, ເຄື່ອງຫຼິ້ນ.
4. ມາລະຍາດການກິນອາຫານ, ດື່ມ, ນັ່ງ.
5. ມາລະຍາດການຍ່າງ, ນົບໄຫວ້, ນົບຂໍອະນຸຍາດ.

# ການປະຕິບັດຕົນໃນການນອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການນອນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ກາງຄືນຫຼານຄວນ ນອນເວລາໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນຄອບຄົວ ຕື່ນນອນຕອນເຊົ້າ, ເຂົ້ານອນແຕ່ຫົວຄ່ຳ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍນອນ ໂດຍໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການກິນ ແລະ ອະນາໄມຮ່າງກາຍ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການກິນ ແລະ ອະນາໄມຮ່າງກາຍ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານໄດ້ກິນເຂົ້າມື້ໜຶ່ງຈັກເທື່ອ? ຫຼານຄວນອະນາໄມຮ່າງກາຍແນວໃດ?.
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນຄອບຄົວ ກິນເຂົ້າ, ເຂົ້າຫ້ອງນ້ຳ, ອະນາໄມ ປາກແຂ້ວ, ໃບໜ້າ, ຕົນຕົວ.
- ໃຫ້ເດັກນ້ອຍທາສີຮູບຄືນໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການນຸ່ງເຄື່ອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການນຸ່ງເຄື່ອງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານຄວນອະນາໄມຕົນເອງແນວໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນການນຸ່ງເຄື່ອງ, ແຕ່ງຕົວດ້ວຍຕົນເອງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຢັດເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຳໃຊ້ເຄື່ອງຫຼິ້ນຢ່າງປະຢັດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຫຼານມີເຄື່ອງຫຼິ້ນ ຫຍັງແດ່? ເວລາຫຼິ້ນແລ້ວ ຄວນບົວລະບັດຮັກສາແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການນຳໃຊ້ເຄື່ອງຫຼິ້ນຢ່າງປະຢັດ ຕ້ອງຫຼິ້ນໃຫ້ຖືກວິທີ, ເຄື່ອງຫຼິ້ນບາງຢ່າງຄວນລ້າງ ຫຼື ເຊັດໃຫ້ສະອາດ. ຫຼັງຈາກຫຼິ້ນແລ້ວ ເກັບໃສ່ຖົງ ຫຼື ກັບ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍຍິງ, ຊາຍ ໂດຍນຳໃຊ້ສີຕາມໃຈ.

# ການປະຢັດເຄື່ອງໃຊ້



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການນຳໃຊ້ເຄື່ອງໃຊ້ຢ່າງປະຢັດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຫຼານມີເຄື່ອງໃຊ້ ໃນການຮຽນຫຍັງແດ່? ເວລາຫຼານໃຊ້ແລ້ວຄວນບົວລະບັດຮັກສາ ແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການນຳໃຊ້ເຄື່ອງໃຊ້ຢ່າງປະຢັດ ຕ້ອງໃຊ້ໃຫ້ຖືກວິທີ, ເຄື່ອງໃຊ້ບາງຢ່າງຄວນລ້າງ ຫຼື ເຊັດໃຫ້ສະອາດ ຫຼັງຈາກໃຊ້ແລ້ວ ເກັບເຄື່ອງໃສ່ຖົງ ຫຼື ກັບ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍຍິງ, ຊາຍ ໂດຍນຳໃຊ້ສີຕາມໃຈ.

# ການມີສ່ວນຮ່ວມໃນການເກັບມ້ຽນເຄື່ອງນຸ່ງ, ເຄື່ອງໃຊ້, ເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການມີສ່ວນຮ່ວມໃນການເກັບມ້ຽນເຄື່ອງນຸ່ງ, ເຄື່ອງໃຊ້, ເຄື່ອງຫຼິ້ນ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຢູ່ເຮືອນຫຼານໄດ້ຊ່ວຍວຽກ ພໍ່, ແມ່ ຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ເດັກນ້ອຍມີສ່ວນຮ່ວມໃນຄອບຄົວ ແມ່ນເກັບມ້ຽນເຄື່ອງນຸ່ງ, ເຄື່ອງໃຊ້, ເຄື່ອງຫຼິ້ນຂອງຕົນເອງ ໃຫ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ເຄື່ອງໃຊ້ ໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການກິນອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກມາລະຍາດໃນການກິນອາຫານ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເວລາກິນອາຫານຄວນເຮັດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເວລາກິນອາຫານ ໃຊ້ບ່ວງຕັກແກງ, ໃຊ້ຊ້ອມຈັບຕ່ອນຊີ້ນ, ຫຍ້ຳອາຫານໃຫ້ແຫຼກ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍກິນອາຫານໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການດື່ມເຄື່ອງດື່ມ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກມາລະຍາດໃນການດື່ມເຄື່ອງດື່ມ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ເວລາດື່ມນ້ຳຫຼາຍຄວນດື່ມແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເວລາດື່ມ ຈັບຈອກທາງລຸ່ມໃຫ້ແໜ້ນ ແລະ ຄ່ອຍໆກືນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍດື່ມນ້ຳ ໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການນັ່ງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກມາລະຍາດໃນການນັ່ງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍເຮັດຫຍັງ? ເວລານັ່ງເດັກນ້ອຍຍິງ ແລະ ຊາຍ ຄວນນັ່ງແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ມາລະຍາດໃນການນັ່ງ ຕ້ອງນັ່ງຕ່ຳ, ນັ່ງຄູ້ເຂົ່າ, ເດັກນ້ອຍຍິງນັ່ງພັບແພບ ແລະ ຊາຍນັ່ງ ຂັດສະໝາດ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍນັ່ງ ໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການຍ່າງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍສາມາດບອກມາລະຍາດໃນການຍ່າງ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍເຮັດຫຍັງ? ຫຼານຄວນຍ່າງແນວໃດ ເມື່ອກາຍຜູ້ໃຫຍ່?
- ໃຫ້ເດັກນ້ອຍສະຫຼຸບ: ມາລະຍາດໃນການຍ່າງ ເວລາກາຍຜູ້ໃຫຍ່ຕ້ອງກົ້ມຫົວ ແລະ ຢໍ້ໂຕລົງ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍຍ່າງ ໂດຍນຳໃຊ້ສີຕາມໃຈ.

# ມາລະຍາດໃນການນົບໄຫວ້



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກມາລະຍາດໃນການນົບໄຫ້ວພະສົງ, ພະພຸດທະຮູບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍເຮັດຫຍັງ? ເວລາຫຼານນົບໄຫ້ວພະສົງ, ພະພຸດທະຮູບ ຄວນນົບແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ເວລານົບໄຫວ້ພະສົງ ຫຼື ພະພຸດທະຮູບຕ້ອງ ນັ່ງຄູ້ເຂົ່າຍໍມືນົບໂດຍການຍໍມືຊ້າຍ ແລະ ຂວາ ແປະໃສ່ກັນໃຫ້ປາຍມືເທົ່າກັນສູງພຽງເອິກ, ຍໍມືຂຶ້ນໃຫ້ປາຍນິ້ວມືຈຸຕິນຜົມແລ້ວກາບລົງສາມເທື່ອ.
- ໃຫ້ເດັກນ້ອຍທາສີຮູບ ເດັກນ້ອຍນົບໄຫ້ວພະສົງ ໂດຍນໍາໃຊ້ສີຕາມໃຈ.

# ມາລະຍາດໃນການນົບຂໍອະນຸຍາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກມາລະຍາດໃນການນົບຂໍອະນຸຍາດ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍເຮັດຫຍັງ? ເວລາຫຼານຈະໄປຫຼິ້ນຢູ່ໃນໂຮງຮຽນຄວນບອກໃຜ?
- ໃຫ້ເດັກນ້ອຍສະຫຼຸບ: ມາລະຍາດໃນການນົບ ຂໍອະນຸຍາດຄອບລາໄປ, ມາກັບຜູ້ໃຫຍ່: ຍົກມືຊ້າຍ ແລະ ຂວາ ແປະໃສ່ກັນໃຫ້ປາຍມືເທົ່າກັນຢູ່ກາງເອິກ, ກົ້ມຫົວລົງ ໃຫ້ປາຍນິ້ວມືຈຸຫວ່າງຄິ້ວ ຫຼື ຈຸປາຍດັງ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.